**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

5197 ---ຂີ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ຫ້ອງການພັດທະນາ ແລະ ຄຸ້ມຄອງ ຄອງນໍ້າວຽງຈັນ

ເລກທີ________/ພຊສ.ນວ
ນະຄອນຫຼວງວຽງຈັນ,ວັນທີ 06 JUN 2024

ຂາເຂົ້າ | ສຳນັກງານອົງການປົກຄອງ ນວ | ໜ່ວຍງານບໍລິການປະຕູດຽວ
ເລກທີ: 5044
ວັນທີ: 4. 11. 2024

# ໜັງສືລາຍງານ

**ຮຽນ:** ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ນັບຖືຢ່າງສູງ.

**ເລື່ອງ:** ບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ສະເໜີຂໍລວງຄອງລະບາຍນໍ້າທີ່ຕື້ນເຂີນ ແລະ ອຸດຕັນ ເຂດບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ.

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 1097/ຈນວ. ລົງວັນທີ 21 ທັນວາ 2022, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ;
- ອີງຕາມ ຂໍ້ຕົກລົງ ຂອງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 0966/ຈນວ, ລົງວັນທີ 11 ພະຈິກ 2019. ວ່າດ້ວຍການພັດທະນາ ແລະ ຄຸ້ມຄອງເຂດສະຫງວນຄອງນໍ້າວຽງຈັນ;
- ອີງຕາມ ຂໍ້ຕົກລົງ ຂອງ ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 34/ຈນວ, ລົງວັນທີ 11 ມັງກອນ 2024 ວ່າດ້ວຍການແຕ່ງຕັ້ງຄະນະຫ້ອງການພັດທະນາ ແລະ ຄຸ້ມຄອງ ຄອງນໍ້າວຽງຈັນ.
- ອີງຕາມ ໜັງສືສະເໜີ ຂອງບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ສະບັບເລກທີ 0289/ສສ, ລົງວັນທີ 01 ທັນວາ 2023;
- ອີງຕາມ ບົດບັນທຶກກອງປະຊຸມ ການປຶກສາຫາລື ແລະ ລົງກວດກາພື້ນທີ່ຄອງລະບາຍນໍ້າ ເຂດບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ຄັ້ງວັນທີ 11 ມັງກອນ ແລະ 30 ມັງກອນ 2024.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ໃນນາມ ຫ້ອງການພັດທະນາ ແລະ ຄຸ້ມຄອງ ຄອງນໍ້າວຽງຈັນ ຂໍຖືເປັນກຽດຮຽນສະເໜີລາຍງານມາຍັງທ່ານຊາບ: ກ່ຽວກັບ ບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ສະເໜີຂໍລວງຄອງລະບາຍນໍ້າທີ່ຕື້ນເຂີນ ແລະ ອຸດຕັນ ເຂດບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ເຊິ່ງມີລາຍລະອຽດດັ່ງນີ້:

## I. ສະພາບລວມ:

ກ່ຽວກັບ ບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ໄດ້ເຮັດໜັງສືສະເໜີ ຂໍລວງຄອງລະບາຍນໍ້າທີ່ຕື້ນເຂີນ ແລະ ອຸດຕັນ ຢູ່ ບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ຫາ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ຫຼັງຈາກນັ້ນໄດ້ຂໍຄຳເຫັນນຳຫົວໜ້າ ຫ້ອງການພັດທະນາ ແລະ ຄຸ້ມຄອງ ຄອງນໍ້າວຽງຈັນ ຈຶ່ງເຫັນດີໃຫ້ເອົາໄດ້ເຂົ້າກອງປະຊຸມຄະນະຫ້ອງການພັດທະນາ ແລະ ຄຸ້ອຄອງ ຄອງນໍ້າຽງຈັນ ແລະ ກອງປະຊຸມໄດ້ເຫັນດີມອບໃຫ້ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ເປັນເຈົ້າການແຕ່ງຕັ້ງມອບໃຫ້ພະນັກງານວິຊາການທີ່ກ່ຽວຂ້ອງລົງກວດກາເບິ່ງພາກສະໜາມຕົວຈິງ ຂອງຂອບເຂດທີ່ບໍລິສັດສະເໜີ.

## II. ຜົນການຈັດຕັ້ງປະຕິບັດ:

1. ຫ້ອງການພັດທະນາ ແລະ ຄຸ້ມຄອງ ຄອງນໍ້າວຽງຈັນ ໄດ້ເປີດກອງປະຊຸມຄົ້ນຄວ້າປຶກສາຫາລືກັນ ແລະ ເຫັນດີເປັນເອກະພາບກັນໃຫ້ລົງສຳຫຼວດເກັບກຳຄວາມຍາວຂອງຄອງລະບາຍນໍ້າ ແລະ ຈຳນວນຕອນດິນທີ່ທັງໝົດໃນຂອບເຂດດັ່ງກ່າວ;
2. ຜ່ານການລົງເກັບກຳຂໍ້ມູນ, ສຳຫຼວດ-ວັດແທກ ຄອງລະບາຍນໍ້າ ຄອງນໍ້າວຽງຈັນ ຢູ່ຈຸດດັ່ງກ່າວ ແມ່ນມີຂອບເຂດກວມເອົາ 2 ບ້ານຄື: ບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ມີຄວາມຍາວທັງໝົດ 350

ແມັດ, ຄວາມກວ້າງມີ 2 ຂະໜາດຄື: ກວ້າງ 50 ແມັດ; ກວ້າງ 70 ແມັດ ແລະ ມີເນື້ອທີ່ທັງໝົດ 20.970,67 ຕາແມັດ, ຕອນດິນທີ່ນອນຢູ່ໃນຄອງລະບາຍນ້ຳເຂດດັ່ງກ່າວ ແມ່ນເປັນຂອງທ່ານ ດຣ. ກຸງ ທັງໝົດ. ຂອບເຂດດັ່ງກ່າວ ເຫັນວ່າສະພາບຍັງບໍ່ທັນໄດ້ຈີກເປັນຄອງເທື່ອ ແລະ ຍັງເປັນດິນທາມທີ່ຕື້ນເຂີນ, ນ້ຳໄຫຼບໍ່ສະດວກ; ຈຳເປັນຕ້ອງມີການລອງ, ຈີກເປັນຄອງລະບາຍນ້ຳ ຕາມມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້;

3. ຄອງລະບາຍນ້ຳ ຄອງນ້ຳວຽງຈັນ ຢູ່ຈຸດດັ່ງກ່າວ ແມ່ນນອນຢູ່ໃນເຂດເຊົ່າສຳປະທານຂອງບໍລິສັດ ມິດຕະພາບພັດທະນາການກະເສດ ຈຳກັດ (ຟາມກາບຊ້ອນ) ກຳນົດ 70 ປີ. ບໍລິສັດດັ່ງກ່າວແມ່ນບໍ່ເຫັນດີໃຫ້ພາກສ່ວນອື່ນເຂົ້າມາພັດທະນາລອງຄອງລະບາຍນ້ຳໃນຂອບເຂດທີ່ຕົນເອງເຊົ່າສຳປະທານ, ຖ້າຫາກວ່າຈະລອງຄອງນ້ຳເຂດດັ່ງກ່າວແທ້ ທາງບໍລິສັດ ມິດຕະພາບພັດທະນາການກະເສດ ຈຳກັດ ແມ່ນຈະຂໍເປັນຜູ້ຈັດຕັ້ງປະຕິບັດໃນການລອງຄອງນ້ຳເອງ ໂດຍສົມທົບກັບຜູ້ມີສ່ວນຮ່ວມກໍ່ຄືເຈົ້າຂອງດິນທີ່ມີໃບຕາດິນ;
4. ທ່ານ ດຣ. ກຸງ ເຈົ້າຂອງຕອນດິນ ແມ່ນເຫັນດີໃນການຂໍພັດທະນາລອງຄອງລະບາຍນ້ຳຂອງບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ, ແຕ່ຖ້າບໍລິສັດ ມິດຕະພາບພັດທະນາການກະເສດ ຈຳກັດ (ຟາມກາບຊ້ອນ) ຈະຂໍພັດທະນາເອງນັ້ນ ແມ່ນທ່ານ ດຣ. ກຸງ ເຈົ້າຂອງຕອນດິນບໍ່ເຫັນດີ;
5. ໃນຊ່ວງຕົ້ນປີ 2023 ບໍລິສັດ ສຸກທະວີໄຊ ຂົນສົ່ງ ຈຳກັດຜູ້ດຽວ ກໍ່ໄດ້ເຄີຍສະເໜີຂໍອະນາໄມລອງຄອງລະບາຍນ້ຳຈຸດດັ່ງກ່າວ ແຕ່ຂັ້ນເທິງຍັງບໍ່ທັນເຫັນດີອະນຸຍາດໃຫ້ຈັດຕັ້ງປະຕິບັດເທື່ອ ຍ້ອນແຜນຜັງ-ຮູບແບບໃນການກໍ່ສ້າງຄອງລະບາຍນ້ຳແມ່ນຍັງບໍ່ທັນສຳເລັດ ໃຫ້ລໍຖ້າກ່ອນ.

## III. ທັດສະນະທາງດ້ານວິຊາການ:

1. ໂດຍລວມແມ່ນເຫັນດີຕາມການສະເໜີຂອງບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ທີ່ສະເໜີຂໍອະນຸຍາດລອງຄອງລະບາຍນ້ຳທີ່ຕື້ນເຂີນ ແລະ ອຸດຕັນ ເຂດບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ລົງສູ່ຮ່ອງລະບາຍນ້ຳຂອງໂຮງງານເບຍລາວ ແລະ ລົງສູ່ແມ່ນ້ຳຂອງ ເພື່ອເຮັດໃຫ້ການໄຫຼຂອງນ້ຳສະດວກຂຶ້ນ ແລະ ຫຼີກລ້ຽງບັນຫານ້ຳຖ້ວມຂັງຕ່າງໆໃນອານາຄົດ, ບໍລິສັດ ແມ່ນມີຄວາມພ້ອມໃນດ້ານງົບປະມານ ແລະ ກົນຈັກຄົບຖ້ວນ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ສຳເລັດກ່ອນລະດູຝົນທີ່ຈະມາເຖິງນີ້.
2. ແຜນການຈັດຕັ້ງປະຕິບັດວຽກງານລອງຄອງລະບາຍນ້ຳຂອງບໍລິສັດແມ່ນຈະຈີກດິນຄອງລະບາຍນ້ຳທີ່ຕື້ນເຂີນ ແລະ ອຸດຕັນ ມາຖົມເຂດໃກ້ບໍລິເວນຄອງລະບາຍນ້ຳດັ່ງກ່າວ ໂດຍຈະບໍ່ເຄື່ອນຍ້າຍດິນອອກໄປພາຍນອກເດັດຂາດ, ແຕ່ຕ້ອງມີການຕິດຕາມ-ກວດກາ, ຊີ້ນຳ-ນຳພາ ຈາກຄະນະຫ້ອງການ ພັດທະນາ ແລະ ຄຸ້ມຄອງຄອງນ້ຳວຽງຈັນ ຢ່າງໃກ້ຊິດ ໃນການລອງຄອງລະບາຍນ້ຳ.
3. ສຳລັບ ຈຸດທີ່ ບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ທີ່ສະເໜີຂໍອະນຸຍາດລອງຄອງລະບາຍນ້ຳທີ່ຕື້ນເຂີນ ແລະ ອຸດຕັນ ແມ່ນ ຕັ້ງຢູ່ໃນເຂດສຳປະທານ ຂອງ ບໍລິສັດມິດຕະພາບການກະເສດ(ຟາມກາບຊ້ອນ) ເນື້ອທີ່ 148 ເຮັກຕາ ໃນໄລຍະຜ່ານເຫັນວ່າການພັດທະນາແມ່ນບໍ່ທັນເປັນໄປຕາມແຜນການທີ່ໄດ້ເຊັນສັນຍາຮ່ວມກັບນະຄອນຫຼວງວຽງຈັນ, ຍັງມີຄວາມຊັກຊ້າແກຍາວເວລາໃນການພັດທະນາ, ເປັນຕົ້ນແມ່ນການທະລຸພື້ນທີ່ເຮັດເປັນຄອງລະບາຍນ້ຳ ກໍ່ຍັງບໍ່ທັນສາມາດເຮັດໄດ້ ພ້ອມກັນນັ້ນຢູ່ໃນເຂດຂອງໂຄງການ ກໍ່ໄດ້ມີການເຮັດເປັນຄູເກັບກັກນ້ຳຕັນທາງນ້ຳໄຫຼເຮັດເປັນໜອງເພື່ອລ້ຽງປານຳອີກ.
4. ຍ້ອນພາກລັດເຮົາຍັງຂາດງົບປະມານຮັບໃຊ້ໃນການລອງຄອງລະບາຍນ້ຳ ຈຶ່ງຍັງບໍ່ທັນໄດ້ມີການລອງອານະໄມ, ທະລຸບ່ອນທີ່ມີການອຸດຕັນ ຕາມແລວຄອງນ້ຳວຽງຈັນ ແລະ ຮ່ອງນ້ຳລະບາຍນ້ຳທີ່ໄຫຼເຂົ້າຫາຄອງນ້ຳວຽງຈັນ ຕາມເຕັກນິກທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ຕົກລົງ ສະບັບເລກທີ 0966/ຈນວ, ລົງວັນທີ 11 ພະຈິກ 2019.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ຂໍທິດຊີ້ນຳ ໃນການຈັດຕັ້ງປະຕິບັດ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ຊກ **ຫົວໜ້າພະແນກ**

(ຫ້ອງການ ພັດທະນາ ແລະ ຄຸ້ມຄອງ ຄອງນ້ຳວຽງຈັນ)

ພະແນກ ... ນະຄອນຫຼວງວຽງຈັນ

ຄຳຕັນ ເຮືອຫາວົງ